**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

******************

ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ເລກທີ 20/ຖວ

# ກົດລະບຽບ

## ການຄຸ້ມຄອງວຽກງານສິລະປະກຳ

--------------------

*- ອີງຕາມ ມາດຕາ 19 ຂອງລັດຖະທຳມະນູນ ແລະມາດຕາ 127 ຂອງກົດໝາຍອາຍາ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.*

*- ອີງຕາມ ດຳລັດຂອງປະທານສະພາລັດຖະມົນຕີ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ວ່າດ້ວຍການຈັດຕັ້ງ, ການເຄື່ອນໄຫວຂອງກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ສະບັບທີ 147/ປສລ, ລົງວັນທີ 20/12/1909.*

**ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ**

**ອອກກົດລະບຽບ :**

## ໝວດທີ I

## ຫຼັກການທົ່ວໄປ

**ມາດຕາ 1**: ວຽກງານສິລະປະ ໝາຍເຖິງ ການຜະລິດສ້າງ, ການເຄື່ອນໄຫວ, ການສະແດງ, ການແລກປ່ຽນ ແລະ ການຈຳໜ່າຍຜະລິດຕະພັນດ້ານສິລະປະກຳທຸກປະເພດ ທີ່ສັງຄົມມະນຸດສ້າງຂຶ້ນມາໄດ້ໃນໄລຍະປະຫວັດສາດອັນແນ່ນອນ ແລະ ມີເອກະລັກທາງດ້ານສິລະປະກຳຂອງຊາດໃຜລາວໂດຍສະເພາະ ເຊັ່ນ: ເພງຮ້ອງ, ຂັບລຳ, ບົດດົນຕີ, ເຄື່ອງດົນຕີ, ຟ້ອນ, ລາຍການສະແດງສິລະປະດົນຕີຟ້ອນ, ສິລະປະເວທີ, ການຜະລິດດ້ານສິລະປະວິຈິດຕະກຳສີໄມ້ລາຍມືໃນການແຕ້ມ, ປັ້ນຫຼໍ່, ຄວັດແກະສະຫຼັກ, ຕົບແຕ່ງ, ປະດັບປະດາ, ສິລະປະສີໄມ້ລາຍມື ແລະ ການເອ້ຢ້ອງໃສ່ອາຄານສະຖານທີ່, ເອ້ໃສ່ຜະລິດຕະພັນດ້ານວັດຖຸ ແລະ ສິນຄ້າປະເພດຕ່າງໆ.

**ມາດຕາ 2:** ກົດລະບຽບສະບັບນີ້ ມີຜົນບັງຄັບໃຊ້ໃນຂົງເຂດການປະດິດຄິດແຕ່ງ, ການຜະລິດສ້າງ, ການເຄື່ອນໄຫວການສະແດງ, ການແລກປ່ຽນ ແລະ ໃນຂົງເຂດການຈຳໜ່າຍຜະລິດຕະພັນດ້ານສິລະປະກຳທຸກປະເພດ ນັບທັງສົ່ງອອກ ແລະ ການນຳເຂົ້າດ້ານດັ່ງກ່າວ ໂດຍສະເພາະໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອແນ່ໃສ່ ປົກປັກຮັກສາ ແລະ ສົ່ງເສີມເຜີຍແຜ່ ໃຫ້ສິລະປະກຳອັນດີງາມຂອງຊາດ ແລະ ຂອງ ເຜົ່າຕ່າງໆ ມີການຂະຫຍາຍຕົວຢ່າງແຮງ ແລະ ໜັກແໜ້ນ, ພ້ອມກັນນັ້ນກໍເພື່ອກະຕຸ້ນຊຸກຍູ້ ຂະບວນການປົກປັກຮັກສາ ແລະ ສ້າງສາປະເທດຊາດ ໃຫ້ມີຄວາມເບີກບານມ່ວນຊື່ນ ແລະ ຈົບງາມ, ສະກັດກັ້ນປະກົດການ ຂອງ ສິລະປະກຳທີ່ຍືນກັບວັດທະນະທຳ ແລະ ຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງ ເຜົ່າຕ່າງໆ.

## ໝວດທີ II
## ລະບຽບການຈັດຕັ້ງເຄື່ອນໄຫວ

**ມາດຕາ 3.** ບຸກຄົນ, ການຈັດຕັ້ງ ແລະ ຫົວໜ່ວຍທຸລະກິດໃດໆ ທີ່ມີຈຸດປະສົງຈະສືບຕໍ່ ຫຼື ຈັດຕັ້ງເຄື່ອນໄຫວວຽກງານດ້ານສິລະປະກຳເປັນອາຊີບ ຫຼື ເຄິ່ງອາຊີບໃຫ້ໄປຂຶ້ນທະບຽນນຳອົງກາຄຸ້ມຄອງທີ່ກ່ຽວຂ້ອງຢ່າງຖືກຕ້ອງເສຍກ່ອນ ຈຶ່ງມີສິດເຄື່ອນໄຫວໄດ້ ຄື:

3.1. ບຸກຄົນ, ການຈັດຕັ້ງ ແລະ ຫົວໜ່ວຍທຸລະກິດ ທີ່ສັງກັດກະຊວງ, ອົງການທຽບເທົ່າ ແລະ ອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງ ໃຫ້ໄປຂໍອະນຸຍາດຂຶ້ນທະບຽນນຳກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ (ກົມສິລະປະກຳ);

3.2. ບຸກຄົນ, ການຈັດຕັ້ງ ແລະ ຫົວໜ່ວຍທຸລະກິດ ທີ່ຢູ່ໃຕ້ການຄຸ້ມຄອງຂອງທ້ອງຖິ່ນໃຫ້ໄປຂໍອະນຸຍາດຂຶ້ນທະບຽນ ນຳ ພະແນກຖະແຫຼງຂ່າວ ແລະ ວັດທະນະທຳແຂວງ-ກຳແພງນະຄອນວຽງຈັນ, ສຳລັບເມືອງທີ່ຢູ່ຫ່າງໄກຈາກທີ່ຕັ້ງຂອງແຂວງ, ມອບໃຫ້ ຫ້ອງການຖະແຫຼງຂ່າວ ແລະ ວັດທະນະທຳເປັນຜູ້ໃຫ້ການອະນຸຍາດ.

**ມາດຕາ 4:** **ລະບຽບໃນການຂໍອະນຸຍາດຂຶ້ນທະບຽນຈັດຕັ້ງການເຄື່ອນໄຫວວຽກງານດ້ານສິລະປະກຳປະກອບດ້ວຍຂໍ້ມູນ ດັ່ງລຸ່ມນີ້:**

1. ໃບຄຳຮ້ອງຂໍຂຶ້ນທະບຽນເຄື່ອນໄຫວວຽກງານດ້ານສິລະປະກຳ: 1 ສະບັບ;
2. ໃບຊີວະປະຫວັດຫຍໍ້: 1 ສະບັບ, ຕິດຮູບ 3 x 4;
3. ບັດປະຈຳຕົວ ຫຼື ໃບສຳມະໂນຄົວ (ອັດສຳເນົາ) 1 ສະບັບ;
4. ຮູບຖ່າຍຂະໜາດ 3 x 4 = 2 ແຜ່ນ, (ຮູບຖ່າຍບໍ່ໃຫ້ເກີນ 1 ປີ);
5. ເງິນຄ່າອອກໃບອະນຸຍາດຂຶ້ນທະບຽນໃຫ້ບຸກຄົນ ຫຼື ໃຫ້ການຈັດຕັ້ງ (ຕາມຂໍ້ກຳ ນົດ);
6. ຄ່າທຳນຽມການຈັດຕັ້ງເຄື່ອນໄຫວວຽກງານສິລະປະກຳທີ່ຄັດຕິດມາພ້ອມນີ້).

**ມາດຕາ 5:** **ການຈັດຕັ້ງເຄື່ອນໄຫວວຽກງານສິລະປະກຳແບ່ງອອກເປັນ 2 ປະເພດ ຄື: ປະເພດອາຊີບ ແລະ ປະເພດສະໝັກຫຼິ້ນ (ເຄິ່ງອາຊີບ).**

5.1. ປະເພດອາຊີບໄດ້ແກ່ການຈັດຕັ້ງເປັນໝູ່ຄະນະ ຫຼື ບຸກຄົນທີ່ປະກອບອາຊີບດ້ວຍການເຄື່ອນໄຫວວຽກງານສິລະປະກຳ ເພື່ອລ້ຽງຊີບເປັນຕົ້ນຕໍ ເຊັ່ນ: ກອງສິລະປະກອນ, ກອງກາຍຍະສິນ, ກອງລະຄອນລຳເລື່ອງ, ກອງລະຄອນຕຸກກະຕາ, ກອງຂັບລຳທ້ອງຖິ່ນ, ໂຮງງານ ຫຼື ໜ່ວຍງານຜະລິດເຄື່ອງສິລະປະກຳສີໄມ້ລາຍມື, ຮ້ານອັດສຽງ ແລະ ຈຳໜ່າຍກາແຊັດ, ແຜ່ນສຽງ, ໂຮງຮຽນສິລະປະກຳ, ຮ້ານຈຳໜ່າຍຜະລິດຕະພັນສິລະປະ, ວິຈິດຕະກຳສີໄມ້ລາຍມືໂດຍສະເພາະ ແລະ ວຽກງານສິລະປະກຳ ອື່ນໆ...

5.2. ປະເພດສະໝັກຫຼິ້ນ (ເຄິ່ງອາຊີບ) ໄດ້ແກ່ການຈັດຕັ້ງເປັນໝູ່ຄະນະ ຫຼື ບຸກຄົນທີ່ປະກອບອາຊີບອື່ນເປັນຕົ້ນຕໍ ແລະ ເຄື່ອນໄຫວວຽກງານສິລະປະກຳເປັນສຳຮອງໃນເວລາຫວ່າງ ເຊັ່ນ: ຄະນະສິລະປະ, ຄະນະລະຄອນປະເພດຕ່າງໆ, ຄະນະລຳເລື່ອງ, ຄະນະຂັບລຳທ້ອງຖິ່ນ, ວົງດົນຕີ, ໝໍລຳການຈັດຕັ້ງສອນດົນຕີ, ສອນຮ້ອງເພງ, ສອນຟ້ອນ, ສອນວິຈິດຕະກຳອື່ນໆ ແລະ ການເຄື່ອນໄຫວສິລະປະດ້ານຕ່າງໆ.

## ໝວດທີ III
## ການຄຸ້ມຄອງ

**ມາດຕາ 6:** ທຸກຮູບການ ແລະ ເນື້ອໃນ ຂອງຜະລິດຕະພັນສິລະປະກຳທີ່ຈະນຳອອກກວດສອບ, ເຄື່ອນໄຫວ, ສະແດງ ແລະ ຈຳໜ່າຍນັ້ນ ໃຫ້ປະຕິບັດຕາມເນື້ອໃນຈິດໃຈ ມາດຕາ 2 ຂອງ ກົດລະບຽບສະບັບນີ້ ທັງໄດ້ການກວດກາ ແລະ ການອະນຸຍາດຈາກອົງການຄຸ້ມຄອງວຽກງານສິລະປະກຳຂັ້ນສູນກາງ ແລະ ຂັ້ນທ້ອງຖິ່ນທີ່ກຳນົດໄວ້ຢູ່ໃນ ມາດຕາ 3 ຂອງ ກົດລະບຽບສະບັບນີ້.

ຫ້າມນຳເອົາຜະລິດທະພັນສິລະປະກຳທຸກປະເພດ ທີ່ບໍ່ທັນໄດ້ຮັບການກວດກາ ແລະ ການອະນຸມັດອອກໄປເຄື່ອນໄຫວ ແລະ ຈຳໜ່າຍເປັນອັນຂາດ.

**ມາດຕາ 7:** ສຳລັບຜະລິດທະພັນສິລະປະກຳທີ່ຈະສົ່ງອອກໄປເຄື່ອນໄຫວ, ໄປສະແດງ, ໄປແລກປ່ຽນ ແລະ ຈຳໜ່າຍຢູ່ຕ່າງປະເທດ ນັບທັງຈະນຳເອົາຂອງຕ່າງປະເທດເຂົ້າມາເຄື່ອນໄຫວສະແດງ, ແລກປ່ຽນ ແລະ ຈຳໜ່າຍຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລ້ວນແຕ່ຕ້ອງໄດ້ຜ່ານການກວດກາ ແລະ ອະນຸມັດ ຈາກກົມສິລະປະກຳຂອງ ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳແຫ່ງດຽວເທົ່ານັ້ນ, ໂດຍສົ່ງຕົວຢ່າງຂອງ ຜະລິດຕະພັນແຕ່ລະຊະນິດພ້ອມຊະນິດລະ 1 ອັນ, ຖ້າຜະລິດຕະພັນອັນໃດໃຫຍ່ ແລະ ມີຄວາມຫຍຸ້ງຍາກໃນການສົ່ງບໍ່ໃຫ້ສ້າງເປັນຮູບຖ່າຍ ເພື່ອສົ່ງກວດກາ ແລະ ອະນຸມັດ.

**ມາດຕາ 8:** ບົດເພງ, ບົດຂັບລຳ, ບົດດົນຕີ, ລາຍການສະແດງສິລະປະດົນຕີ-ຟ້ອນ, ສິລະປະເວທີ ແລະ ສິລະປະວິຈິດຕະກຳສີໄມ້ລາຍມືຕ່າງໆ ທີ່ອັດເຂົ້າກາແຊັດສຽງ ຫຼື ຖ່າຍທຳເຂົ້າ

ກາແຊັດວີດີໂອ ເພື່ອຈຳໜ່າຍ ພາຍຫຼັງທີ່ໄດ້ຮັບການກວດກາ ແລະ ອະນຸມັດຢ່າງຖືກຕ້ອງແລ້ວນັ້ນ, ໃຫ້ບຸກຄົນ ຫຼື ອົງການທີ່ສ້າງຂຶ້ນ ມອບກາແຊັດດັ່ງກ່າວແນວລະສອງສະບັບ ໃຫ້ແກ່ກົມສິລະປະກຳ ກະຊວງຖະແຫຼງຂ່າວ ແລະ ວັດທະນະທຳ ຫຼື ແຂວງ-ກຳແພງນະຄອນວຽງຈັນ ທີ່ຕົນຂຶ້ນກັບ ເພື່ອເກັບກຳຮັກສາໄວ້ເປັນສຳເນົາ ແລະ ປ້ອງກັນສິດອັນຖືກຕ້ອງໃຫ້ເຈົ້າຂອງລິຂະສິດ.

ສຳລັບຕົວຢ່າງຂອງຜະລິດຕະພັນດ້ານວິຈິດຕະກຳສີໄມ້ລາຍມືຕ່າງໆ ທີ່ຈະຜະລິດອອກຈຳໜ່າຍໃຫ້ຖ່າຍເປັນຮູບສີ ຂະໜາດ 9 x 13 ຊມ ສົ່ງໃຫ້ບ່ອນລະ 2 ເຊັ່ນກັນ.

**ມາດຕາ 9:** ຫ້າມບຸກຄົນ ຫຼື ການຈັດຕັ້ງຕ່າງໆ ນຳເອົາຜະລິດທະພັນດ້ານສິລະປະກຳຂອງຜູ້ອື່ນໄປພິມ, ຈົດກ່າຍລອກແບບ ເພື່ອຈຳໜ່າຍເປັນເດັດຂາດ, ເວັ້ນເສຍແຕ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດທີ່ມີໃບຢັ້ງຢືນຢ່າງເປັນທາງການຈາກອົງການຄຸ້ມຄອງສິລະປະກຳຂັ້ນກ່ຽວຂ້ອງ.

**ມາດຕາ 10:** ຫ້າມນັກສະແດງ ນັບທັງອາຊີບ ແລະ ສະໝັກຫຼິ້ນນຸ່ງຖືບໍ່ສຸພາບ, ບໍ່ສອດຄ່ອງກັບເລື່ອງສະແດງ, ບໍ່ຖືກລັກສະນະຊາດອອກສະແດງຢູ່ຕາມເວທີ ແລະ ສະຖານທີ່ຕ່າງໆ, ໂດຍສະເພາະແມ່ນຫ້າມນັກສະແດງຍິງນຸ່ງສັ້ງ, ນຸ່ງກະໂປ່ງ, ນຸ່ງສະເກີດທີ່ບໍ່ສອດຄ່ອງກັບເລື່ອງ ແລະ ມີລັກສະນະໂລດໂຜນ, ຫ້າມນັກສະແດງຊາຍຈົ່ງຜົມຍາວເກີນຂອບເຂດຂຶ້ນສະແດງ (ມີຂໍ້ແນະນຳສະເພາະກ່ຽວກັບລັກສະນະຊາດ, ປະຊາຊົນກ້າວໜ້າ, ນັບທັງການນຸ່ງຖື ແລະ ຊົງຜົມ).

**ມາດຕາ 11:** ການມ່ວນຊື່ນຢູ່ຕາມງານບຸນປະເພນີຂອງຊາດ ຫຼື ຂອງຊົນເຜົ່າ, ງານພິທີທາງການ, ງານບັນເທີງໄດ້ ຫຼື ການບັນເທີງຕາມຮ້ານອາຫານ-ຮ້ານກິນດື່ມ ແລະ ງານຕ່າງໆນັ້ນ ໃຫ້ຟ້ອນ, ຂັບລຳ ແລະ ຮ້ອງເພງລາວເທົ່ານັ້ນ, ເວັ້ນເສຍແຕ່ງານມ່ວນຊື່ນຢູ່ສະຖານທີ່ທີ່ຮັບໃຊ້ຄົນຕ່າງປະເທດໂດຍສະເພາະ ເຊັ່ນ: ງານປີໃໝ່ສາກົນ ແລະ ການບັນເທີງຢູ່ຕາມໂຮງແຮມ ຈຶ່ງອະນຸຍາດໃຫ້ອອກຟ້ອນ ແລະ ໃຊ້ເພງ ຂອງຕ່າງປະເທດໄດ້, ແຕ່ບໍ່ໃຫ້ເກີນ 30% ຂອງ ລາຍການມ່ວນຊື່ນທັງໝົດໃນແຕ່ລະຄັ້ງ.

**ມາດຕາ 12:** ໃຫ້ ກອງ ແລະ ຄະນະສິລະປະທຸກປະເພດ ສະເໜີຂໍອະນຸມັດລາຍການທັງໝົດທີ່ຕົນຈະນຳໄປສະແດງໃນແຕ່ລະຄັ້ງ ຫຼື ໃນຮອບເດືອນ ແລ້ວແຕ່ເງື່ອນໄຂສະດວກຂອງຕົນ ແລະ ແຈ້ງວັນເວລາ, ສະຖານທີ່ສະແດງໃນແຕ່ລະປາງບຸນ ຫຼື ໃນງານຕ່າງໆ ເປັນແຕ່ລະຄັ້ງ ຫຼື ຫຼາຍຄັ້ງແລ້ວແຕ່ຕົນມີຄວາມອາດສາມາດ.

## ໝວດທີ IV
## ການປະຕິບັດພັນທະຕໍ່ລັດ

**ມາດຕາ 13: ໃຫ້ການຈັດຕັ້ງຂັ້ນຕ່າງໆ ຫຼື ບຸກຄົນທີ່ເຄື່ອນໄຫວວຽກງານສິລະປະກຳປະຕິບັດພັນທະອັນຖືກຕ້ອງ ແລະ ຊອບທຳໃຫ້ແກ່ລັດ ຕາມແຕ່ລະກໍລະນີ ຄື:**

13.1. ນັກສິລະປິນ ແລະ ນັກວິຈິດຕະກຳ ທີ່ນຳໃຊ້ພາຫານະວັດຖຸອຸປະກອນຂອງລັດໄປສະແດງ ຫຼື ທຳການຜະລິດຫາລາຍໄດ້ຕາມການອະນຸຍາດຂອງການຈັດຕັ້ງຈະເສຍພັນທະໃຫ້ແກ່ລັດຕາມອັດຕາສ່ວນຂອງລາຍໄດ້ທີ່ຕົນໄດ້ຮັບຈາກການໄປສະແດງ ແຕ່ລະຄັ້ງ ແລະ ມູນຄ່າຂອງການຜະລິດທະພັນແຕ່ລະຊະນິດທີ່ຕົນຜະລິດອອກ.

ໃນກໍລະນີພາຫານະ ແລະ ວັດຖຸອຸປະກອນຖືກເປ່ເພ ຫຼື ຕົກເຮັ່ຍເສຍຫາຍ, ໃຫ້ປົວແປງ ຫຼື ໃຊ້ແທນຄືນຕາມມູນຄ່າ ແລະ ລາຄາເດີມ.

13.2. ນັກສິລະປະທີ່ໄດ້ຮັບອະນຸຍາດໃຫ້ໄປສະແດງຫາລາຍໄດ້ໃນງານຕ່າງໆ (ນອກຈາກງານບັນເທີງຢູ່ຕາມໂຮງແຮມ, ຮ້ານກິນດື່ມ ແລະ ງານລາຕີສະໂມສອນ) ໃຫ້ເສຍພັນທະຕາມອັດຕາສ່ວນຂອງລາຍໄດ້ຈາກການໄປສະແດງແຕ່ລະຄັ້ງ;

13.3. ການໄປສະແດງຫາລາຍໄດ້ໃນງານບັນເທີງຢູ່ຕາມໂຮງແຮມ, ຮ້ານອາຫານ-ຮ້ານກິນດື່ມ ແລະ ງານລາຕີສະໂມສອນຕາມການອະນຸມັດໃຫ້ເສຍພັນທະຕາມອັດຕາສ່ວນຈາກລາຍໄດ້ທີ່ຕົນໄດ້ຮັບຈາກການໄປສະແດງແຕ່ລະຄັ້ງ;

13.4. ນັກສິລະປະທີ່ໄດ້ຮັບການອະນຸມັດໄປສະແດງຫາລາຍໄດ້ຢູ່ຕ່າງປະເທດ, ໃຫ້ປະຕິບັດພັນທະຕາມອັດຕາສ່ວນ ຂອງ ລາຍໄດ້ທັງໝົດທີ່ຕົນໄດ້ຮັບຈາກການໄປສະແດງແຕ່ລະຄັ້ງ;

**13.5. ການຈັດຕັ້ງ ຫຼື ບຸກຄົນ ທີ່ນຳເອົາຜະລິດທະພັນສິລະປະກຳອອກວາງສະແດງ ແລະ ຈຳໜ່າຍ ຢູ່ ພາຍໃນ ແລະ ຕ່າງປະເທດ, ໃຫ້ເສຍຄ່າທຳນຽມ ດັ່ງນີ້:**

- ກາແຊັດ ແລະ ແຜ່ນສຽງເພງຮ້ອງ, ຂັບລຳ, ລະຄອນ, ກະແຊັດວີດີໂອ ລາຍການສະແດງ ແລະ ສາລະຄະດີດ້ານສິລະປະກຳປະເພດຕ່າງໆ ຕາມອັດຕາສ່ວນຂອງລາຍຮັບ;
- ຮູບແຕ້ມປະເພດຕ່າງໆ ຕາມອັດຕາສ່ວນຂອງລາຍຮັບ;
- ຮູບປັ້ນ-ຫຼໍ່ຄວັດແກະສະຫຼັກ ແລະ ຫັດຖະກຳສີໄມ້ລາຍມືດ້ານວິຈິດຕະກຳປະເພດຕ່າງໆ ຕາມອັດຕາສ່ວນຂອງລາຍຮັບ.

13.6. ການຈັດຕັ້ງ ຫຼື ບຸກຄົນ ທີ່ນຳເອົາຜະລິດທະພັນດ້ານສິລະປະກຳຂອງຕ່າງປະເທດເຂົ້າມາຈຳໜ່າຍ ຫຼື ມາໃຊ້ຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໃຫ້ເສຍຄ່າທຳນຽມນຳເຂົ້າ-ກາແຊັດ ແລະ ແຜ່ນສຽງເພງຮ້ອງ, ຂັບລຳ, ລະຄອນ ກາແຊັດວີດີໂອ, ລາຍການສະແດງ ແລະ ສາລະຄະດີດ້ານສິລະປະກຳປະເພດຕ່າງໆ ຕາມອັດຕາສ່ວນ ຂອງລາຄາຕົ້ນທຶນມາເຂົ້າ (ຍົກເວັ້ນແຕ່ອົງການວິຊາສະເພາະ ແລະ

ສຳນັກງານຕ່າງປະເທດ ປະຈຳ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເພື່ອຮັບໃຊ້ວິຊາສະເພາະຈຶ່ງບໍ່ເສຍຄ່າທຳນຽມ);

13.7. ຄ່າທຳນຽມໃນການກວດກາ ແລະ ອະນຸຍາດໃຫ້ຜະລິດທະພັນສິລະປະກຳທຸກປະເພດ ອອກເຄື່ອນໄຫວຈໍລະຈອນແຈກຢາຍຢູ່ພາຍໃນ, ສົ່ງອອກຕ່າງປະເທດ ແລະ ນຳເຂົ້າຈາກຕ່າງປະເທດ ໂດຍອີງຕາມປະເພດກາແຊັດສຽງ ຫຼື ແຜ່ນສຽງ 30 ນາທີ, 60 ນາທີ, 90 ນາທີ ແລະ ກາແຊັດວີດີໂອ ລາຍການສະແດງສິລະປະ ຫຼື ສາລະຄະດີທາງດ້ານສິລະປະກຳປະເພດຕ່າງໆ ທີ່ມີຄວາມຍາວ 60 ເຖິງ 120 ນາທີ, 100 ນາທີ, ຈະໄລ່ເປັນເງິນກີບຕໍ່ເທື່ອ.

13.8. ຄ່າທຳນຽມໃນການກວດແກ້ເນື້ອໃນການປະດິດແຕ່ງ ແລະ ການຜະລິດສ້າງຜະລິດຕະພັນສິລະປະກຳແຕ່ລະປະເພດ ຄື: ເພງຮ້ອງ, ຂັບລຳ ແລະ ດົນຕີເປັນແຕ່ລະບົດ, ລະຄອນປະເພດຕ່າງໆ ເປັນແຕ່ລະເລື່ອງ ແລະ ຮູບຜະລິດທະພັນດ້ານວິຈິດຕະກຳເປັນແຕ່ລະຊະນິດ ຈະໄລ່ເປັນເງິນກີບຕໍ່ເທື່ອ;

13.9. ໃຫ້ປະຕິບັດພັນທະຕາມຂໍ້ກຳນົດຄ່າທຳນຽມການຈັດຕັ້ງເຄື່ອນໄຫວວຽກງານສິລະປະກຳທີ່ໄດ້ຄັດຕິດມາພ້ອມນີ້.

**ມາດຕາ 14**: ລາຍໄດ້ຕ່າງໆ ທີ່ໄດ້ຮັບນັ້ນ ມອບເປັນລາຍຮັບເຂົ້າງົບປະມານຂອງລັດ ຢ່າງຖືກຕ້ອງກັບ ກົນໄກຄຸ້ມຄອງການເງິນຂອງລັດ.

## ໝວດທີ V
## ມາດຕະການຈັດຕັ້ງປະຕິບັດ

**ມາດຕາ 15**: ການຈັດຕັ້ງ ຫຼື ບຸກຄົນໃດປະຕິບັດຖືກຕ້ອງຕາມລະບຽບການ ແລະ ມີຜົນງານດີເດັ່ນ ຈະໄດ້ຮັບຄວາມສະດວກໃນການດຳເນີນການເຄື່ອນໄຫວວຽກງານດ້ານນີ້ ແລະ ຈະໄດ້ຮັບການຊ່ວຍເຫຼືອຈາກອົງການຄຸ້ມຄອງວຽກງານສິລະປະກຳແຕ່ລະຂັ້ນເປັນຢ່າງດີ.

**ກົງກັນຂ້າມ ຖ້າການຈັດຕັ້ງ ຫຼື ບຸກຄົນໃດຫາກລະເມີດຈະຖືກປັບໄໝລົງໂທດຕາມກົດໝາຍ ຄື:**

15.1. ຜູ້ລະເມີດ ຄັ້ງທີ 1: ໂດຍບໍ່ເຈດຕະນາ ຫຼື ເຈດຕະນາຈະຖືກສຶກສາອົບຮົມທັງປັບໄໝ;

15.2. ຜູ້ລະເມີດ ຄັ້ງທີ 2: ໂດຍບໍ່ເຈດຕະນາ ຫຼື ເຈດຕະນາຈະຖືກປັບໄໝ ແລະ ບໍ່ໃຫ້ເຄື່ອນໄຫວວຽກງານສິລະປະກຳ ກຳນົດ 3 ເດືອນ;

15.3. ຜູ້ລະເມີດ ຄັ້ງທີ 3: ໂດຍເຈດຕະນາ ຫຼື ບໍ່ເຈດຕະນາຈະຖືກປັບໄໝ ແລະ ບໍ່ໃຫ້ເຄື່ອນໄຫວວຽກງານສິລະປະກຳ ກຳນົດ 1 ປີ;

15.4. ຕໍ່ຜູ້ທີ່ມາເອົາຜະລິດທະພັນດ້ານສິລະປະກຳທຸກປະເພດຂອງຜູ້ອື່ນໄປພິມ, ໄປອັດສຳເນົາ, ອອກແບບອັດກ່າຍ ເພື່ອຈຳໜ່າຍໂດຍບໍ່ໄດ້ຮັບອະນຸຍາດຈາກເຈົ້າຂອງລິຂະສິດ

ທີ່ມີການຢັ້ງຢືນຈາກອົງການຄຸ້ມຄອງວຽກງານສິລະປະກຳຂັ້ນກ່ຽວຂ້ອງ ຈະຖືກປັບໄໝຕາມອັດຕາສ່ວນຂອງມູນຄ່າຕົ້ນທຶນທີ່ເຈົ້າຂອງລິຂະສິດລົງທຶນປະດິດສ້າງຂຶ້ນ, ຈະຖືກລົງໂທດຕາມກົດໝາຍອາຍາ;

15.5. ປະຕິບັດການປັບໄໝຕາມຂໍ້ກຳນົດຄ່າທຳນຽມການຈັດຕັ້ງເຄື່ອນໄຫວວຽກງານສິລະປະກຳທີ່ໄດ້ຄັດຕິດມາພ້ອມນີ້;

15.6. ນຳເຂົ້າ ຫຼື ຈຳໜ່າຍຜະລິດທະພັນອັນເຊື່ອມຊາມ, ລາມົກ, ຝືນກັບແນວທາງນະໂຍບາຍຂອງລັດຖະບານ, ລະບຽບກົດໝາຍຂອງລັດ, ຝືນກັບຮີດຄອງປະເພນີອັນດີງາມຂອງຊາດ ແລະ ຂອງເຜົ່າຕ່າງໆ ຈະຖືກໂທດຕາມກົດໝາຍອາຍາ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ກຳນົດໄວ້ຢູ່ໃນ ມາດຕາ 127.

**ມາດຕາ 16**: ພົນລະເມືອງລາວ, ຄົນຕ່າງດ້າວຜູ້ທີ່ມີສັນຊາດ ແລະ ບໍ່ມີສັນຊາດທີ່ອາໄສຢູ່ໃນສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ຄົນຕ່າງປະເທດທີ່ມາປະຈຳການ, ມາເຮັດວຽກ, ມາຢ້ຽມຢາມ ແລະ ມາທ່ອງທ່ຽວ ຢູ່ໃນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ລ້ວນແຕ່ຕ້ອງເຄົາລົບ, ນັບຖືປະຕິບັດຕາມກົດລະບຽບສະບັບນີ້ ຢ່າງເຂັ້ມງວດທຸກປະການ.

**ມາດຕາ 17**: ຮັບປະກັນໃຫ້ພົນລະເມືອງລາວ, ຄົນຕ່າງປະເທດທີ່ຕັ້ງພູມລຳເນົາ ແລະ ເຂົ້າມາທາກິນຢູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ທີ່ຖືກຕ້ອງຕາມກົດໝາຍມີສິດເຄື່ອນໄຫວ, ຜະລິດສ້າງ, ແລກປ່ຽນ ແລະ ຈຳໜ່າຍຜະລິດທະພັນທາງດ້ານສິລະປະກຳຕາມກົດລະບຽບສະບັບນີ້.

**ມາດຕາ 18**: ໃຫ້ທຸກກະຊວງ, ອົງການທຽບເທົ່າ, ແຂວງ, ກຳແພງນະຄອນວຽງຈັນ ແລະ ພາກສ່ວນກ່ຽວຂ້ອງ ຈົ່ງຈັດຕັ້ງປະຕິບັດກົດລະບຽບສະບັບນີ້ຢ່າງເຂັ້ມງວດ.

**ມາດຕາ 19**: ກົດລະບຽບສະບັບນີ້ ມີຜົນບັງຄັບໃຊ້ໃນທົ່ວປະເທດ ນັບແຕ່ມື້ລົງລາຍເຊັນ ແລະ ເຜີຍແຜ່ເປັນຕົ້ນໄປ. ທຸກຂໍ້ກຳນົດ, ກົດລະບຽບ ແລະ ມະຕິຄຳສັ່ງຕ່າງໆ ຂອງຂະແໜງຖະແຫຼງຂ່າວ ແລະ ວັດທະນະທຳຂັ້ນສູນກາງ ແລະ ທ້ອງຖິ່ນທີ່ວາງອອກ ໃນເມື່ອກ່ອນທີ່ຂັດກັບກົດລະບຽບສະບັບນີ້ ລ້ວນແຕ່ຖືກລົບລ້າງ ແລະ ປ່ຽນແທນ ໂດຍກົດລະບຽບສະບັບນີ້.

ວຽງຈັນ,ວັນທີ 10 / 1 / 1992

ລັດຖະມົນຕີ,

ກະຊວງ ຖະແຫຼງຂ່າວ ແລະ ວັດທະນະທຳ

**ໜູແກ້ວ ອໍລະບູນ**

( ໄດ້ເຊັນ ແລະ ຈ້ຳກາແລ້ວ )